**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

...........

ສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ
ຖະໜົນ ໄກສອນພົມວິຫານ.
ບ້ານໂພນພະເນົາ, ເມືອງໄຊເສດຖາ,
ນະຄອນຫລວງວຽງຈັນ. ຕູ້ ປ. ນ 4596
ໂທ: (856 21) 453312, 720456
ແຟກ: (856 21) 452580

ເລກທີ: 0047 ........................./ສຄອ

ນະຄອນຫລວງວຽງຈັນ, ວັນທີ: 15 JAN 2020

## ຄຳສະເໜີແນະຕໍ່ກັບນະໂຍບາຍ
## ປັບປຸງຂະບວນການກຳນົດຄ່າແຮງງານຂັ້ນຕ່ຳສຸດຢູ່ໃນ ສປປລາວ

- ອີງຕາມຜົນຂອງກອງປະຊຸມສຳມະນາລະຫວ່າງການນຳຂັ້ນສູງຂອງອົງການຮ່ວມມືສາມຝ່າຍກ່ຽວກັບການກຳນົດຄ່າແຮງງານຂັ້ນຕ່ຳສຸດ ທີ່ຈັດຂຶ້ນ ຢູ່ນະຄອນຫຼວງວຽງຈັນຄັ້ງວັນທີ 1 - 3 ຕຸລາ 2019
- ອີງຕາມຜົນຂອງກອງປະຊຸມຄົ້ນຄວ້າເພື່ອຍົກລະດັບຄວາມສາມາດໃນການປັບປຸງຂະບວນການກຳນົດຄ່າແຮງງານຂັ້ນຕ່ຳສຸດໃຫ້ແກ່ ຕາງໜ້າລັດຖະບານ, ຕາງໜ້າຜູ້ອອກແຮງງານ ແລະ ຕາງໜ້າຜູ້ໃຊ້ແຮງງານໃນສປປລາວ, ທີ່ຈັດໂດຍອົງການແຮງງານສາກົນໃນລະຫວ່າງວັນທີ 01-02 ຕຸລາ 2019
- ອີງຕາມຜົນຂອງການປຶກສາຫາລືກັນຢູ່ພາຍໃນຂອງສະພາການຄ້າແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຄວາມຄິດເຫັນຕ່າງໆຈາກພາກເອກະຊົນ, ໂດຍສະເພາະແມ່ນກຸ່ມປະກອບການດ້ານການຄ້າ ແລະ ສະມາຄົມນັກທຸລະກິດ

## I. ຄວາມຄິດເຫັນຕໍ່ກັບຄວາມສຳຄັນຂອງນະໂຍບາຍຄ່າແຮງງານຂັ້ນຕ່ຳສຸດ

- ການກຳນົດຄ່າແຮງງານຂັ້ນຕ່ຳສຸດແມ່ນຂົງເຂດນະໂຍບາຍທີ່ສຳຄັນສຳລັບບັນດານັກທຸລະກິດເຊິ່ງໂດຍທົ່ວໄປແລ້ວ, ແມ່ນຢາກໃຫ້ມີ ຂະບວນການກຳນົດຄ່າແຮງງານ ແບບໂປ່ງໃສ ແລະ ສາມາດຄາດຄະເນຕໍ່ການປ່ຽນແປງນັ້ນໄດ້ ແລະ ຢາກໃຫ້ມີຄ່າແຮງງານຂັ້ນຕ່ຳສຸດຢ່າງສົມເຫດສົມຜົນ. ຢູ່ ສປປລາວ, ຂະບວນການກຳນົດ ຄ່າແຮງງານຂັ້ນຕ່ຳສຸດທີ່ຫາກໍ່ຜ່ານມານັ້ນຊີ້ໃຫ້ເຫັນວ່າ ຍັງມີບາງບ່ອນຈະຕ້ອງໄດ້ປັບປຸງແກ້ໄຂຄືນໃໝ່ຢູ່ໃນເວລານີ້.
  ການປັບປຸງແກ້ໄຂທີ່ສາມາດຄາດຄະເນໄດ້ ແລະ ມີຄວາມໂປ່ງໃສຂອງຂະບວນການກຳນົດຄ່າແຮງງານນັ້ນ ສາມາດໃຫ້ຜົນປະໂຫຍດຫລາຍແກ່ບັນດານັກທຸລະກິດຂອງພວກເຮົາ.
- ຄ່າແຮງງານຂັ້ນຕ່ຳສຸດໃນປະຈຸບັນຂອງ ສປປລາວ ແມ່ນ 1,100,000 ກີບ ຕໍ່ ເດືອນ (ຫລື ປະມານ $128.59). ຄ່າແຮງງານຂັ້ນຕ່ຳສຸດໃນ ສປປລາວ ແມ່ນອັດຕານຶ່ງດຽວທີ່ນຳໃຊ້ສຳລັບຜູ້ອອກແຮງງານທຸກຄົນ ແລະ ບໍ່ໄດ້ມີອັດຕາແຕກຕ່າງໄປຕາມຈຸດພິເສດຂອງແຕ່ລະເຂດພື້ນທີ່, ຕາມລະດັບສີມືແຮງງານ ຫລື ອີງຕາມຜູ້ໃຊ້ແຮງງານທີ່ແຕກຕ່າງກັນ. ພວກເຮົາເຫັນວ່າໃນໄລຍະທົດສະວັດຜ່ານມາ ອັດຕາຄ່າແຮງງານຢູ່ສປປລາວໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ. ໃນປີ 2008, ຄ່າແຮງງານຂັ້ນຕ່ຳສຸດແມ່ນ 290,000 ກີບ ຕໍ່ເດືອນ, ມາເຖິງປີ 2009 ຂຶ້ນມາເປັນ 348,000 ກີບ. ຕົ້ນປີ 2012, ຄ່າແຮງງານຂັ້ນຕ່ຳສຸດຕໍ່ເດືອນເພີ່ມຂຶ້ນຈາກ 348,000 ກີບ ມາເປັນ 626,000 ກີບ, ເຊິ່ງເປັນການເພີ່ມຂຶ້ນປະມານ 80%. ໃນປີ 2015, ຄ່າແຮງງານໄດ້ເພີ່ມສູງຂຶ້ນອີກ ເປັນ 900,000 ກີບ ຕໍ່ເດືອນ ແລະ ໃນປີ 2018, ຄ່າແຮງງານຂັ້ນຕ່ຳສຸດກໍເພີ່ມສູງຂຶ້ນເຖິງລະດັບປະຈຸບັນຄື 1,100,000 ກີບ ຕໍ່ເດືອນ.

- ຄ່າແຮງງານຂັ້ນຕ່ຳສຸດແມ່ນນະໂຍບາຍສຳຄັນຫລາຍຕໍ່ ຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ຕໍ່ປະເທດຊາດໂດຍລວມ. ຄ່າແຮງງານຂັ້ນຕ່ຳສຸດມີຜົນກະທົບຢ່າງຍິ່ງຕໍ່ຄວາມຢູ່ດີກິນດີຂອງຜູ້ອອກແຮງງານແລະຄອບຄົວຂອງເຂົາເຈົ້າ, ໂດຍສະເພາະແມ່ນຕໍ່ກັບຜູ້ອອກແຮງງານທີ່ຢູ່ໃນຖານລ່າງສຸດຂອງລະບົບກະຈາຍລາຍໄດ້ໃນສັງຄົມ. ນອກນັ້ນ ຍັງມີຜົນກະທົບຕໍ່ພາກທຸລະກິດເອກະຊົນ, ຕົວຢ່າງກໍແມ່ນ ມີອິດທິພົນຕໍ່ການຢູ່ຫລອດຂອງທຸລະກິດ ຫລື ອາດກາຍເປັນສິ່ງທີ່ກະຕຸ້ນໃຫ້ເກີດການຍົກລະດັບສີມືແຮງງານໃຫ້ສູງຂຶ້ນ ແລະ ມີການລົງທຶນຫລາຍຂຶ້ນ. ດັ່ງນັ້ນ ຈຶ່ງບໍ່ມີຄວາມສົງໄສໃດໆ ທີ່ຄ່າແຮງງານຂັ້ນຕ່ຳສຸດ ຈະກາຍເປັນປະເດັນຖົກຖຽງກັນລະຫວ່າງພາກສ່ວນຕ່າງໆໃນສັງຄົມກ່ຽວກັບຂະບວນການ ແລະລະດັບຂອງຄ່າແຮງງານຂັ້ນຕ່ຳສຸດເຫລົ່ານັ້ນ. ປະເດັນເຫລົ່ານີ້ກໍມັກຈະກາຍເປັນທາງສຽງວິພາກວິຈານແບບບໍ່ສ້າງສັນຢູ່ໃນສັງຄົມ ແລະ ອາດກາຍເປັນບັນຫາການເມືອງ. ຢ່າງໃດກໍຕາມ, ຍັງມີຄວາມເປັນໄປໄດ້ສຳລັບ ສປປລາວ ພວກເຮົາ ທີ່ຈະໄດ້ປັບປຸງຂະບວນການກຳນົດຄ່າແຮງງານຂັ້ນຕ່ຳສຸດຂອງຕົນໂດຍຜ່ານຂະບວນການທີ່ໃສສະອາດ ແລະ ມີຫລັກຖານອ້າງອີງຄັກແນ່ ສາມາດຄາດຄະເນໄດ້ ແລະ ມີຄວາມໂປ່ງໃສຢ່າງແທ້ຈິງ.

- ສິ່ງສຳຄັນອີກອັນນຶ່ງກໍຄື ນະໂຍບາຍຄ່າແຮງງານຂັ້ນຕ່ຳສຸດນີ້ແມ່ນໄດ້ຮັບການເສີມຕື່ມດ້ວຍການນຳໃຊ້ມາດຕະການທາງດ້ານນະໂຍບາຍທີ່ເໝາະສົມໃຫ້ແກ່ການພັດທະນາວິສາຫະກິດ, ເຊັ່ນ: ການຫລຸດພາສີໃຫ້ແກ່ຄ່າແຮງງານທີ່ສູງຂຶ້ນ, ການສະໜັບສະໜູນດ້ານການເງິນໃຫ້ແກ່ກອງທຶນໝູນວຽນ, ການຮັກສາສະຖຽນລະພາບຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ການຍົກເລີກການລົງທຶນແລະເຄື່ອນໄຫວທຸລະກິດ, ເຫລົ່ານີ້ເປັນຕົ້ນ.
- ເຖິງແມ່ນວ່າ ການເອົາຄ່າແຮງງານຂັ້ນຕ່ຳສຸດຂອງປະເທດເຮົາໄປທຽບໃສ່ກັບຄ່າແຮງງານຂອງຫລາຍປະເທດ ບໍ່ແມ່ນການປະຕິບັດທີ່ສາມາດເຮັດໄດ້ໂດຍກົງ ເພາະວ່າແຕ່ລະປະເທດກໍມີວິທີການກຳນົດຄ່າແຮງງານຕາມລະບົບ ຂອງຕົນ ແລະ ສາມາດທຽບໄດ້ຍາກ, ແຕ່ສິ່ງສຳຄັນສຳລັບສປປລາວຂອງພວກເຮົາ ກໍຈະຕ້ອງໄດ້ເຂົ້າໃຈເຖິງລະດັບຄ່າແຮງງານຕ່າງໆທີ່ນຳໃຊ້ຢູ່ປະເທດຕ່າງໆໃນພາກພື້ນເພື່ອຈະຮັບປະກັນໃຫ້ພາກເອກະຊົນຂອງພວກເຮົາສາມາດແຂ່ງຂັນໄດ້ ແລະ ປະຊາຊົນຂອງພວກເຮົາ ມີຄວາມຜາສຸກກັບຄຸນນະພາບຊີວິດທີ່ດີ ເມື່ອປຽບທຽບກັບປະເທດຕ່າງໆເຫລົ່ານັ້ນແລ້ວ.
- ພາຍຫລັງທີ່ໄດ້ຄົ້ນຄວ້າແລະທົບທວນຄືນ ພາກສ່ວນສຳຄັນຕ່າງໆຂອງຂະບວນການກຳນົດຄ່າແຮງງານຂັ້ນຕ່ຳສຸດ ແລະ ເຫັນໄດ້ເຖິງບັນຫາສຳຄັນທີ່ສຸດທີ່ຈະຕ້ອງໄດ້ພິຈາລະນາ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຈຶ່ງຂໍສະເໜີແນະກ່ຽວກັບນະໂຍບາຍຂອງຕົນເພື່ອແກ້ໄຂບັນຫາເຫຼົ່ານັ້ນແລະເພື່ອເປັນການສົ່ງເສີມໃຫ້ເກີດການປະຕິບັດຢ່າງມີປະສິດທິພາບສອດຄ່ອງຕາມຄ່າແຮງງານຂັ້ນຕ່ຳສຸດໃນ ສປປລາວຂອງພວກເຮົາ.

## II. ຄຳສະເໜີແນະຂອງ ສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ ກ່ຽວກັບການກຳນົດຄ່າແຮງງານຂັ້ນຕ່ຳສຸດ

- **ຕໍ່ກັບຈຸດປະສົງທີ່ຈະເຮັດໃຫ້ເປົ້າໝາຍຂອງການປັບປຸງເງິນເດືອນຂັ້ນຕ່ຳສຸດສອດຄ່ອງກັບເງື່ອນໄຂຂອງປະເທດ ຄວນພິຈາລະນາດັ່ງນີ້:**
    - ການເພີ່ມຂຶ້ນຂອງຄ່າແຮງງານຕົວຈິງຈະຕ້ອງສອດຄ່ອງກັບສະພາບການເຕີບໂຕໃນໄລຍະຍາວຂອງຜະລິດຕະພັນຢູ່ພາຍໃນປະເທດ, ເພື່ອເຮັດໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດສາມາດຮັກສາທຸລະກິດຂອງຕົນໃຫ້ຄົງຕົວຢູ່ໄດ້ ແລະ ສາມາດສືບຕໍ່ເຄື່ອນໄຫວທຸລະກິດລົງທຶນໃສ່ ການຜະລິດສິນຄ້າ ແລະ ທຸລະກິດໃຫ້ບໍລິການຂອງຕົນ ຢູ່ສປປລາວ;
    - ເພື່ອເປັນການປັບປຸງສະພາບຊີວິດການເປັນຢູ່ຂັ້ນພື້ນຖານຂອງຜູ້ອອກແຮງງານ ແລະ ເຮັດໃຫ້ຜູ້ປະກອບການທຸລະກິດສາມາດສັ່ງຊື້ ແລະ ຂາຍສິນຄ້າຂອງຕົນ ແລະ ມີຜົນກຳໄລຢ່າງສົມເຫດສົມຜົນ;
    - ການກຳນົດເອົາຄ່າແຮງງານຢູ່ສປປລາວແມ່ນໃຫ້ຢູ່ໃນລະດັບຂອງການສາມາດແຂ່ງຂັນໄດ້ຂອງຄູ່ແຂ່ງທາງການຄ້າແລະການລົງທຶນ ກັບ ສປປລາວ
    - ຫລຸດຜ່ອນຜົນກະທົບຕໍ່ໄພເງິນເຟີ້, ຫລຸດຜ່ອນຜົນກະທົບຕໍ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ແລະ ຂະແໜງການຜະລິດສິນຄ້າເພື່ອສົ່ງອອກ;

- ຕັ້ງຄ່າເງິນເດືອນຂັ້ນຕ່ຳສຸດໃຫ້ປະກົດເປັນຈິງໃຫ້ໄດ້;

- **ຕໍ່ກັບໜ່ວຍງານທີ່ມີສິດອຳນາດໃນການກຳນົດຄ່າແຮງງານຂັ້ນຕ່ຳສຸດ, ສອດ ມີຄວາມເຫັນດັ່ງນີ້:**
  - ສະເໜີໃຫ້ພິຈາລະນາ, ໂດຍໃຫ້ມີລະບຽບການກຳນົດຢ່າງລະອຽດ, ສ້າງຕັ້ງໜ່ວຍງານເອກະລາດ ແລະ ເປັນໜ່ວຍງານຖາວອນເຊິ່ງປະກອບດ້ວຍຜູ້ຕາງໜ້າຈາກ ລັດຖະບານ, ອົງການຕົວແທນຂອງຜູ້ອອກແຮງງານ ແລະ ອົງການຕົວແທນຂອງຜູ້ໃຊ້ແຮງງານ ແລະ ບັນດາຜູ້ຊ່ຽວຊານດ້ານເສດຖະກິດ ແລະ ແຮງງານ ເພື່ອເຮັດໜ້າທີ່ໃນການກຳນົດຄ່າແຮງງານຂັ້ນຕ່ຳສຸດ ຫລື ໃຫ້ຄຳສະເໜີແນະກ່ຽວກັບບັນຫາດັ່ງກ່າວນີ້.
  - ສະເໜີໃຫ້ໜ່ວຍງານເອກະລາດທີ່ຈະໄດ້ຮັບການສ້າງຕັ້ງນີ້ ສາມາດເຄື່ອນໄຫວໜ້າທີ່ຂອງຕົນເພື່ອຄົ້ນຄວ້າ ເກັບກຳຂໍ້ມູນ ແລະ ສາມາດສອບຖາມເອົາຂໍ້ມູນ ແລະ ເກັບກຳເອົາຄວາມຄິດເຫັນກ່ຽວກັບຄ່າແຮງງານຂັ້ນຕ່ຳສຸດຈາກພາຍນອກໄດ້. ຢູ່ໃນວຽກງານສຶກສາຄົ້ນຄວ້າເຫລົ່ານັ້ນ:
    - ໜ່ວຍງານເອກະລາດນີ້ສາມາດສຶກສາເກັບກຳຂໍ້ມູນກ່ຽວກັບຊ່ອງວ່າງຂອງຄວາມບໍ່ສະເໝີພາບຂອງຄ່າແຮງງານລະຫວ່າງເພດຍິງແລະເພດຊາຍຢູ່ໃນ ສປປລາວ ແລະ ສາມາດຄົ້ນຄວ້າຄືນແລະປະກອບຄວາມເຫັນຕໍ່ກັບບັນດານະໂຍບາຍທີ່ມີຜົນກະທົບຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສະເໜີໃຫ້ພິຈາລະນານະໂຍບາຍເຫລົ່ານີ້ຄືນໃໝ່ເພື່ອຫລຸດຜ່ອນຜົນກະທົບທາງລົບອັນພາໃຫ້ເກີດຊ່ອງວ່າງຂອງຄວາມບໍ່ສະເໝີພາບຂອງຄ່າແຮງງານລະຫວ່າງເພດຍິງແລະເພດຊາຍຢູ່ໃນ ສປປລາວ.
    - ໜ່ວຍງານເອກະລາດນີ້ສາມາດເຮັດໜ້າທີ່ໃນການສຶກສາກ່ຽວກັບເງື່ອນໄຂທີ່ອາດສາມາດກຳນົດເອົາຄ່າແຮງງານຂັ້ນຕ່ຳສຸດ ຕາມຂະແໜງການຜະລິດ ຫລື ຕາມແຕ່ລະເຂດພື້ນທີ່. ຫລີກເວັ້ນການນຳໃຊ້ສູດຄິດໄລ່ຄ່າແຮງງານຂັ້ນຕ່ຳສຸດແບບຕາຍໂຕ. ຖ້າມີຄວາມຮູ້ສຶກຢາກໃຫ້ມີສູດຄິດໄລ່ແທ້, ກໍຄວນພິຈາລະນາຄົ້ນຄວ້າຫາສູດຄິດໄລ່ທີ່ສາມາດໃຊ້ໄດ້ພຽງຊ່ວງໃດນຶ່ງເທົ່ານັ້ນ, ແລະລະດັບຂອງການຄິດໄລ່ທີ່ແນ່ນອນ ຄວນຈະເປັນການປະຕິບັດຢ່າງມີຫຼັກຖານຢັ້ງຢືນຢ່າງລະອຽດ ໂດຍການມີສ່ວນເຂົ້າຮ່ວມຂອງຄູ່ຮ່ວມງານຈາກພາກສ່ວນຕ່າງໆທາງສັງຄົມ.
    - ໜ່ວຍງານເອກະລາດນີ້ສາມາດດຳເນີນການສຶກສາເບິ່ງວ່າຈະນຳໃຊ້ສູດຄິດໄລ່ຄ່າແຮງງານຂັ້ນຕ່ຳສຸດ (ສຳລັບ ສປປລາວ)ໄດ້ຫລືບໍ່.
  - ຂໍສະເໜີມາຍັງລັດຖະບານ ອະນຸມັດງົບປະມານໃຫ້ແກ່ໜ່ວຍງານເອກະລາດນີ້, ໃຫ້ພຽງພໍກັບການເຄື່ອນໄຫວຕາມພາລະບົດບາດຂອງຕົນ ແລະ ສາມາດດຳເນີນການສຶກສາຄົ້ນຄວ້າເພື່ອເກັບກຳຂໍ້ມູນທີ່ຈຳເປັນຕາມທີ່ກ່າວມາຂ້າງເທິງນັ້ນ.

- **ຕໍ່ກັບຂໍ້ມູນແລະ ຫລັກຖານອ້າງອີງໃນການກຳນົດຄ່າແຮງງານຂັ້ນຕ່ຳສຸດ, ສອດ ມີຄວາມເຫັນດັ່ງນີ້:**
  - ສະເໜີໃຫ້ພິຈາລະນາດັດແກ້ກົດໝາຍໂດຍໃຫ້ບັນຍັດເອົາເນື້ອໃນທີ່ຈະນຳໃຊ້ເຂົ້າໃນວຽກງານກຳນົດຄ່າແຮງງານຕ່ຳສຸດ;
  - ສະເໜີໃຫ້ນຳເອົາຂໍ້ມູນກ່ຽວກັບດັດຊະນີລາຄາຂອງຜູ້ບໍລິໂພກ(CPI)ຈາກສູນສະຖິຕິແຫ່ງຊາດ ມານຳໃຊ້ສຳລັບຄົ້ນຄວ້າກຳນົດຄ່າແຮງງານຂັ້ນຕ່ຳສຸດ
  - ສະເໜີໃຫ້ມີກົດໝາຍ ເພື່ອໃຊ້ເປັນບ່ອນອີງໃນການພິຈາລະນາໃຫ້ຄວາມ "ສະເໝີພາບ" ລະຫວ່າງຄວາມຈຳເປັນໃນການດຳລົງຊີບ ແລະ ເງື່ອນໄຂຕ່າງໆທາງດ້ານເສດຖະກິດສຳລັບຜູ້ອອກແຮງງານ ແລະ ຄອບຄົວຂອງເຂົາເຈົ້າ.
  - ພິຈາລະນາໃຫ້ມີບົດບັນຍັດໄວ້ໃນກົດໝາຍກ່ຽວກັບການເຂົ້າເຖິງຂໍ້ມູນທີ່ຈຳເປັນ ສຳລັບໜ່ວຍງານຜູ້ຊ່ຽວຊານທີ່ໄດ້ຮັບການມອບໝາຍໜ້າທີ່, ຄູ່ຮ່ວມງານທາງສັງຄົມ ແລະ ພາກສ່ວນທີ່ສົນໃຈອື່ນໆ;
  - ເນື່ອງຈາກຂຶ້ນກັບການປ່ຽນແປງໃນຕົວຂອງມັນເອງ, ຈຶ່ງຄວນຫລີກເວັ້ນທີ່ຈະເອົາບັນຫາກ່ຽວກັບ "ຄ່າແຮງງານເພື່ອດຳລົງຊີບ"ມາຄົ້ນຄວ້າ ແລະ ໃຫ້ເໜັ້ນໜັກໃສ່ການຄົ້ນຄວ້າ ແລະ ສະໜັບສະໜູນ ກ່ຽວກັບແນວຄວາມຄິດທີ່ຖືເອົາຂໍ້ມູນຈະແຈ້ງເປັນບ່ອນອ້າງອີງ ແລະ ສາມາດກຳນົດໄດ້ຢ່າງແທ້ຈິງ;

- ຄວນເອົາໃຈໃສ່ຄົ້ນຄວ້າດ້ານຄ່າແຮງງານຕໍ່າສຸດ ທີ່ອີງຕາມຂໍ້ມູນແລະຫລັກຖານທີ່ຫລາຍປະເທດໄດ້ນໍາໃຊ້ ແລະພາໃຫ້ເກີດການປ່ຽນແປງທາງລົບເລັກນ້ອຍລະຫວ່າງ ຄ່າແຮງງານຂັ້ນຕໍ່າສຸດທີ່ເພີ່ມຂຶ້ນ ແລະ ອັດຕາການວ່າຈ້າງແຮງງານທີ່ມີການປ່ຽນແປງ;
- ພົວພັນແລະປຶກສາຫາລືກັບສູນສະຖິຕິແຫ່ງຊາດ ເພື່ອຄົ້ນຄວ້າຂໍ້ມູນກ່ຽວຜະລິດຕະພັນທີ່ມີຢູ່ແລ້ວນັ້ນ ແລະ ຈາກນັ້ນກໍໃຫ້ພິຈາລະນາກໍານົດເອົາຂັ້ນຕອນຕ່າງໆເພື່ອຈະປັບປຸງຂໍ້ມູນກ່ຽວກັບຜະລິດຕະພັນເຫລົ່ານັ້ນ.

- **ຕໍ່ກັບການຈັດວາງຕາຕະລາງເວລາໄວ້ເພື່ອກໍານົດຄ່າແຮງງານຂັ້ນຕໍ່າສຸດ, ສອຄ ມີຄວາມເຫັນດັ່ງນີ້:**
  - ໂດຍຄໍານຶງເຖິງ ສະຖຽນລະພາບຂອງລາຄາສິນຄ້າໃນປະຈຸບັນ ແລະ ການຄາດຄະເນກ່ຽວກັບການຂຶ້ນລົງລາຄາຂອງລາຄາສິນຄ້າໃນອະນາຄົດ, ຈຶ່ງມີຄວາມຮຽກຮ້ອງຕ້ອງການສູງ ທີ່ອີງການຮ່ວມມືສາມຝ່າຍຕ້ອງຫາເວລາພົບປະປຶກສາຫາລືກັນເພື່ອທົບທວນຄ່າແຮງງານຂັ້ນຕໍ່າສຸດໃຫ້ໄດ້ນຶ່ງຄັ້ງໃນທຸກໆສອງປີ;
  - ຖ້າຫາກເຫັນວ່າການປ່ຽນແປງຂອງດັດຊະນີລາຄາຂອງຜູ້ບໍລິໂພກ (CPI) ໄດ້ເພີ່ມຂຶ້ນສູງກວ່າລະດັບທີ່ຕັ້ງໄວ້, ກໍຄວນໃຫ້ມີການທົບທວນຄ່າແຮງງານຂັ້ນຕໍ່າສຸດເປັນກໍລະນີພິເສດ ເຊິ່ງອາດຈະຈັດປະຊຸມຂຶ້ນກ່ອນກໍານົດທີ່ວາງໄວ້ສອງປີນັ້ນ;
  - ສະເໜີວ່າ ຕາງໜ້າຜູ້ໃຊ້ແຮງງານ, ຕາງໜ້າຜູ້ອອກແຮງງານ ແລະ ພາກສ່ວນທີ່ສົນໃຈອື່ນໆທີ່ຈະເຂົ້າຮ່ວມກອງປະຊຸມທົບທວນຄ່າແຮງງານຂັ້ນຕໍ່າສຸດ ຄວນໄດ້ຮັບຂໍ້ມູນທີ່ກ່ຽວຂ້ອງຢ່າງໜ້ອຍສອງອາທິດກ່ອນການປະຊຸມທີ່ສໍາຄັນນີ້, ເພື່ອໃຫ້ພວກເພີ່ນມີເວລາພຽງພໍໃນການຄົ້ນຄວ້າ ແລະວິເຄາະຂໍ້ມູນແລະປະກອບຄວາມຄິດເຫັນໃສ່ເອກະສານແລະຫຼັກຖານຕ່າງໆທີ່ຈະນໍາສະເໜີນັ້ນ;
  - ພິຈາລະນາສ້າງຕັ້ງໜ່ວຍງານວິຊາການຂຶ້ນເຊິ່ງປະກອບດ້ວຍນັກວິຊາການຈາກ ລັດຖະບານ, ສະຫະພັນກໍາມະບານ, ຕົວແທນແຮງງານ ແລະ ບັນດາຜູ້ຊ່ຽວຊານ, ເພື່ອຄົ້ນຄ້ວາ ຫລື ປະກອບຄໍາຄິດເຫັນກ່ຽວກັບຄ່າແຮງງານຂັ້ນຕໍ່າສຸດ;
  - ສະເໜີວ່າ ລັດຖະບານ, ຫຼື ໜ່ວຍງານວິຊາການ, ມີຄວາມສາມາດຄົ້ນຄວ້າເກັບກໍາຂໍ້ມູນ ແລະ ສາມາດເກັບກໍາຄວາມຄິດເຫັນຈາກພາຍນອກ (ພາກສ່ວນອື່ນ) ກ່ຽວກັບຄ່າແຮງງານຂັ້ນຕໍ່າສຸດ;
  - ສະເໜີ ລັດຖະບານ ອະນຸມັດງົບປະມານໃຫ້ ໜ່ວຍງານວິຊາການເຫລົ່ານີ້ ເພື່ອນໍາໃຊ້ເຂົ້າໃນການປະຕິບັດໜ້າທີ່ຂອງຕົນຢ່າງເໝາະສົມ;
  - ສະເໜີ ລັດຖະບານໃຫ້ມີມາດຕະການຄວບຄຸມລາຄາສິນຄ້າ ແລະ ສົ່ງເສີມການຊົມໃຊ້ສິນຄ້າພາຍໃນໃຫ້ສົມດຸນກັບຄ່າຄອງຊີບ ເມື່ອໃດຫາກມີການປັບຄ່າແຮງງານຂັ້ນຕໍ່າສຸດ;
  - ສະເໜີຕໍ່ ລັດຖະບານໃຫ້ງົດເກັບພາສີສິນຄ້າພາຍໃນ;
  - ໃຫ້ຮັກສາອັດຕາແລກປ່ຽນເງິນຕາຕ່າງປະເທດໃຫ້ໝັ້ນທ່ຽງບໍ່ໃຫ້ເກີນເກນອັດຕາສ່ຽງ;

- **ວ່າດ້ວຍການປະຕິບັດໃຫ້ສອດຄ່ອງຕາມນະໂຍບາຍຄ່າແຮງງານຂັ້ນຕໍ່າສຸດ:**
  - ອັດຕາສູງຂຶ້ນຂອງພາກສ່ວນທີ່ບໍ່ປະຕິບັດຕາມນະໂຍບາຍຄ່າແຮງງານຂັ້ນຕໍ່າສຸດ ແມ່ນມີຜົນກະທົບທາງລົບບໍ່ພຽງສະເພາະແຕ່ຕໍ່ກັບ ຜູ້ອອກແຮງງານເທົ່ານັ້ນ ແຕ່ມັນຍັງເປັນຜົນກະທົບຕໍ່ຜູ້ໃຊ້ແຮງງານ (ຫລື ນັກທຸລະກິດ) ທີ່ເປັນຜູ້ຍິນຍອມປະຕິບັດຕາມນະໂຍບາຍເຫລົ່ານັ້ນເປັນຢ່າງດີ, ເພາະວ່າມັນເປັນສິ່ງທີ່ຈະເຮັດໃຫ້ວິສາຫະກິດທີ່ຝ່າຝືນນະໂຍບາຍນັ້ນຈະເປັນຜູ້ໄດ້ປຽບຈາກການໃຊ້ຈ່າຍໄປໃນທາງທີ່ຜິດກົດໝາຍ.
  - ເພື່ອຈະເຮັດໃຫ້ຜູ້ປະກອບການທຸລະກິດປະຕິບັດໃຫ້ສອດຄ່ອງຕາມນະໂຍບາຍຄ່າແຮງງານຕໍ່າສຸດເພີ່ມຂຶ້ນ ຄວນມີມາດຕະການຈັດຕັ້ງປະຕິບັດດັ່ງນີ້:
    - ໃຫ້ການສະໜັບສະໜູນງົບປະມານໃຫ້ແກ່ ສຄອ ແຫ່ງຊາດລາວ ເພື່ອເປີດຂະບວນການເຜີຍແຜ່ໂຄສະນາໃຫ້ຄວາມຮູ້ແກ່ຜູ້ໃຊ້ແຮງງານ ຫລື ຜູ້ປະກອບການທຸລະກິດ ຢ່າງກວ້າງຂວາງ.

- ຈັດກິດຈະກຳຝຶກອົບຮົມເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ອົງການຕົວແທນຂອງຜູ້ອອກແຮງງານແລະຜູ້ໃຊ້ແຮງງານ

## III. ບົດສະຫຼຸບຫຍໍ້ເນື້ອໃນຂອງກອງປະຊຸມສຳມະນາຂອງການນຳລະດັບສູງຂອງອົງການຮ່ວມມືສາມຝ່າຍ

ສຄອ ແຫ່ງຊາດລາວ ສະໜັບສະໜູນເນື້ອໃນຂອງ ບົດສະຫລຸບຂອງກອງປະຊຸມສຳມະນາຂອງການນຳລະດັບສູງ ຂອງອົງການຮ່ວມມືສາມຝ່າຍກ່ຽວກັບການກຳນົດຄ່າແຮງງານຂັ້ນຕ່ຳສຸດ ທີ່ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນໃນວັນທີ 1 - 3 ຕຸລາ 2019 ຜ່ານມາ, ໂດຍສະເພາະແມ່ນ:

- ໃຫ້ມີການສ້າງຕັ້ງໜ່ວຍງານສະເພາະກິດດ້ານຄ່າແຮງງານຂັ້ນຕ່ຳສຸດ ເຊິ່ງປະກອບດ້ວຍ ຕາງໜ້າຈາກອົງການຕົວແທນຂອງຜູ້ອອກແຮງງານ, ອົງການຕົວແທນຂອງຜູ້ໃຊ້ແຮງງານ, ຜູ້ຊ່ຽວຊານເອກະລາດຝ່າຍເສດຖະກິດ ແລະ ແຮງ ງານ ແລະ ຕາງໜ້າຈາກບັນດາກະຊວງຕ່າງໆທີ່ກ່ຽວຂ້ອງ;
- ໃຫ້ຂໍການຊ່ວຍເຫຼືອດ້ານວິຊາການຈາກອົງການແຮງງານສາກົນ (ILO) ເພື່ອມາພັດທະນາແບບວິທີທີ່ຈະນຳໃຊ້ເກັບກຳຂໍ້ມູນກ່ຽວກັບຄ່າຄອງຊີບ ແລະ ນຳເອົາປະສົບການຂອງປະເທດອື່ນກ່ຽວກັບການແກ້ໄຂບັນຫາຄ່າແຮງງານຂັ້ນຕ່ຳສຸດມາແບ່ງປັນ, ແລະ ໃຫ້ການຊ່ວຍເຫລືອໃນດ້ານເກັບກຳ ແລະ ວິເຄາະຂໍ້ມູນ;

ສຄອ ແຫ່ງຊາດລາວ ຂໍຮຽກຮ້ອງມາຍັງກອງປະຊຸມຂອງການນຳລະດັບສູງຂອງອົງການຮ່ວມມືສາມຝ່າຍ ໄດ້ສືບຕໍ່ນຳເອົາປະເດັນກ່ຽວກັບການປັບປຸງຂະບວນການກຳນົດຄ່າແຮງງານຂັ້ນຕ່ຳສຸດ ເຂົ້າເປັນຫົວຂໍ້ບຸລິມະສິດຂອງວາລະປະຊຸມ ເພື່ອຮັບປະກັນໃຫ້ເກີດພະລັງຂັບເຄື່ອນຢູ່ເບື້ອງຫຼັງວຽກງານສະເພາະກິດຂອງການກຳນົດຄ່າແຮງງານຂັ້ນຕ່ຳສຸດເຫລົ່ານີ້.

ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ອຸເດດ ສຸວັນນະວົງ